

ພູມີ ວົງວິຈິດ

# ປະຫວັດສາດ ເມືອງພວນ

ພິມຄັ້ງທີ II

ສົ່ງເສີມການພິມໂດຍ ທ່ານ ຄຳໄພ ແລະ ນາງພິມຂັນ ສິມຊະນະ

ກຸ່ມບໍລິສັດ ຄຳໄພຊະນະກໍ່ສ້າງຈຳກັດ ພ້ອມດ້ວຍລູກຫຼານ

ວັນທີ 8 ສິງຫາ 2012

ພູມີ ວົງວິຈິດ

# ປະຫວັດສາດ
# ເມືອງພວນ

ພິມຄັ້ງທີ II

ສົ່ງເສີມການພິມໂດຍ ທ່ານ ຄຳໄພ ແລະ ນາງພິມຂັນ ສົມຊະນະ
ກຸ່ມບໍລິສັດ ຄຳໄພຊະນະກໍ່ສ້າງຈຳກັດ ພ້ອມດ້ວຍລູກຫຼານ
ວັນທີ 8 ສິງຫາ 2012

ປະຫວັດສາດເມືອງພວນ
ໂດຍ ພູມີ ວົງວິຈິດ
ພິມຄັ້ງທີ II
ຈັດພິມໂດຍ ສຳນັກພິມ ນັກປະພັນລາວ
ຂະໜາດ 176x250 ມມ
ພິມທີ່ ພະໄຊກຣາຟິກ
ຈຳນວນ 1.000 ຫົວ
ທະບຽນ 274-275/ພຈ 09072012



ທ່ານ ພູມີ ວົງວິຈິດ

# ຄຳນຳຂອງສຳນັກພິມ

ສຳນັກພິມ ນັກປະພັນລາວ (ຂຶ້ນກັບສະມາຄົມ ນັກປະພັນລາວ) ພາກພູມໃຈຫຼາຍ ທີ່ໄດ້ສະແດງ **"ຄວາມກະຕັນຍູຮູ້ຄຸນ"** ຕໍ່ບ້ານເກີດເມືອງນອນ, ຕໍ່ບັນພະບຸລຸດ ຜູ້ຕໍ່ສູ້ປົກປັກຮັກສາປະເທດຊາດ ແລະເຜົ່າພັນລາວ ດ້ວຍການພິມປຶ້ມ **"ປະຫວັດສາດເມືອງພວນ "** ເຫຼັ້ມນີ້ ຊຶ່ງເປັນໜຶ່ງໃນບັນດາປະຫວັດສາດສຳຄັນ ຊຶ່ງທ່ານພູມີ ວົງວິຈິດ ຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນລາວພວກເຮົາໄດ້ຂຽນຂຶ້ນໄວ້.

ພິມປຶ້ມເຫຼັ້ມນີ້ປາກົດອອກມາໄດ້ ກໍຍ້ອນມີຫຼາຍຄົນໂຮມ ***"ນ້ຳໃຈ"*** ປະກອບສ່ວນ, ສຳນັກພິມຈຶ່ງຂໍຂອບໃຈ ແລະຮູ້ບຸນຄຸນຕໍ່ທຸກທ່ານ ພິເສດ ແມ່ນ: ທ່ານນາງ **ຄຳອອນ ເພັດດາວເຮືອງ** ນັກກະວີຜູ້ບໍ່ຍອມໃຫ້ຫົວໃຈແລະປາຍປາກກາຂອງຕົນເຫືອດແຫ້ງຊຶ່ງໄດ້ພະຍາຍາມສ້າງທຸກເງື່ອນໄຂເຮັດໃຫ້ການພິມປຶ້ມນີ້ສຳເລັດ ສົມທົບກັບນາມປາກກາ **"ມາລີພວນ"** ແລະ **"ເພັດເມືອງພວນ"** ແລະ **ບັນດາລູກຫຼານຊາວພວນ** ທີ່ໄດ້ພ້ອມກັນ ເຕົ້າໂຮມ **"ນ້ຳໃຈ"** ໃຫ້ທຶນສະໜັບສະໜູນ.

*"ຖ້າພວກເຮົາຫວນຄືນເຖິງປະຫວັດສາດຂອງເມືອງພວນ ຕັ້ງແຕ່ສະໄໝຂຸນເຈືອງມາປົກຄອງ ໃນປີ ຄສ. 575 ເປັນຕົ້ນມາ ຮອດສະໄໝປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນໃນປີ 1975 ເມືອງພວນເຄີຍເປັນສັກຂີພິຍານໃຫ້ແກ່ສະໝໍລະພູມ ໃຫຍ່ນ້ອຍນັບຫຼາຍໆ ພັນຄັ້ງ"* (**ກາບເມືອງພວນ** ໜ້າ 62-63 ທີ່ຈັດພິມໃນປີ 2001). ຊາວພວນໄດ້ອຸທິດຊີວິດ ແລະເລືອດເນື້ອຕໍ່ສູ້ປົກຮັກສາບ້ານເມືອງນອນຂອງຕົນ ແລະ ອີກຈຳນວນບໍ່ໜ້ອຍກໍຈຳໃຈ ພັດພາກດິນແດນ ແຕກກະຈັດກະຈາຍຍາຍໄປຫຼາຍແຫ່ງ ທັງພາຍໃນ ແລະຕ່າງປະເທດ. ການອ່ານສຶກສາ **"ປະຫວັດສາດເມືອງພວນ"** ເຫຼັ້ມນີ້ຈະຊ່ວຍ ໃຫ້ເຮົາໄດ້ຮູ້ໄດ້ເຂົ້າໃຈບາງເລື່ອງລາວໃນອະດີດ ໃນປັດຈຸບັນ ແລະອະນາຄົດໄດ້.

ສຳນັກພິມນັກປະພັນລາວ ຍັງຈະຄັດເລືອກ ປຶ້ມປະເພດ ວັນນະກຳປະຫວັດສາດ ມາພິມອີກ ເປັນຕົ້ນແມ່ນເລື່ອງ: ***ຄວາມຊົງຈຳຂອງເຮົາ (ພູມີ ວົງວິຈິດ) ພື້ນວຽງ ອຸຣັງຄະທາດນິທານ ພະຍາຄັນຄາກ ພື້ນບູລົມ***... ບຸນກຸສົນທີ່ເກີດມີຈາກການຈັດພິມປຶ້ມເຫຼັ້ມນີ້ ສຳນັກພິມນັກປະພັນລາວ ຂໍນ້ອມອຸທິດໃຫ້ແກ່ດວງວິນຍານຂອງທ່ານພູມີ ວົງວິຈິດ ຜູ້ຂຽນປຶ້ມນີ້ ແລະ ທຸກຄົນທີ່ຕົກເປັນເຫຍື່ອ ຂອງສົງຄາມເທິງດິນແດນທີ່ຊື່ **"ເມືອງພວນ"**

ຜູ້ອຳນວຍການ ແລະຫົວໜ້າບັນນາທິການ
ສຳນັກພິມ ນັກປະພັນລາວ
ຫົງເທີນ ຂຸນພິທັກ

# ສາລະບັບ


ຄຳນຳຂອງຜູ້ຂຽນ .......... 1

ພາກທີໜຶ່ງ

ການເວົ້າລວມໆ ເຖິງປະຫວັດສາດໃນອາຊີ ແລະ ອາຊີອາຄະເນ .......... 3

ພາກທີສອງ

ການຂະຫຍາຍຕົວຂອງບັນດາຊົນເຜົ່າ
ທີ່ກໍ່ກຳເນີດມາຈາກມະນຸດຊາວາ .......... 5

ພາກທີ່ສາມ

ການຂະຫຍາຍຕົວຂອງຊົນເຜົ່າ
ທີ່ອອກມາຈາກມະນຸດປັກກິ່ງ .......... 7

ພາກທີ່ສີ່

ການປົກຄອງບ້ານເມືອງຂອງທ້າວເຈັດເຈືອງ .......... 11

ພາກທີຫ້າ

ຄອບຄົວ ເຈົ້າສາຍ .......... 31

ພາກທີຫົກ

ກົງດິນເມືອງພວນ .......... 39

ພາກທີເຈັດ

ສະພາບການຫລັງຈາກໄທສະຫຍາມໄດ້ສົ່ງຄືນ
ດິນຝັ່ງຊ້າຍແມ່ນ້ຳຂອງໃຫ້ແກ່ລາວ .......... 45

ພາກທີແປດ

ເອກະລັກຂອງຊົນເຜົ່າພວນ .......... 53

ພາກສະຫລູບ .......... 55

ພາກເພີ່ມເຕີມ .......... 57

ເລື່ອງໄທເຫຼົ້າເຈືອງ .......... 75



ທ່ານ ພູມີ ວົງວິຈິດ ແລະ ພັນລະຍາ ຖ່າຍເມື່ອປີ 1979

# ຄຳນຳຂອງຜູ້ຂຽນ

ການຄົ້ນຄວ້າເພື່ອຂຽນປະຫວັດສາດເມືອງພວນນີ້ ເປັນການເຮັດຍາກທີ່ສຸດ ເພາະວ່າການຄົ້ນຄວ້າແຕ່ເກົ່າ ກ່ອນທີ່ຂ້າພະເຈົ້າຮ່ວມເຮັດກັບ ຄະນະຮັບຜິດຊອບທີ່ມີສະເດັດເພັດຊະລາດເປັນຜູ້ຊີ້ນຳນັ້ນ ມັກໃຊ້ແຕ່ເອກະສານອັນເປັນທີ່ເຊື່ອຖືຍາກ: ຍົກຕົວຢ່າງ ບາງເອກະສານເວົ້າວ່າ ຄົນລາວ ແລະ ພວນ ອອກມາຈາກໝາກນ້ຳເຕົ້າປຸງ ເຊິ່ງວິທະຍາສາດບໍ່ອະນຸມັດໃຫ້ເຊື່ອຖືໄດ້: ເອກະສານທີ່ສອງ ເວົ້າວ່າຄົນລາວ, ພວນ ແລະ ໄທ ເປັນເຊື້ອສາຍຂອງຂຸນບູລົມ ທີ່ເປັນລູກພະຍາແຖນລົງມາແຕ່ຟ້າ, ອັນນີ້ຖ້າຫາກຖືຕາມວິທະຍາສາດແລ້ວ ກໍ່ເປັນອັນເຊື່ອຖືໄດ້ຍາກ ເພາະວ່າພວກເຮົາຊອກຫາເມືອງຟ້າ ບ່ອນພະຍາແຖນຢູ່ນັ້ນ ບໍ່ເຫັນມີບ່ອນໃດ; ເອກະສານທີ່ສາມ ທີ່ລວບລວມເອົາມາໄດ້ຈາກສາດສະດາຈານປະຫວັດສາດອາເມລິກາ ຊື່ວ່າທ່ານ ດອດເຊີ, ຈາກການຄົ້ນຄວ້າ ຂອງຄະນະປະຫວັດສາດລາວ ແຕ່ສະໄໝເຈົ້າຈິດຕະລາດ, ມະຫາແກ້ວ ເມືອງໂຂງ, ທ່ານ ກຸ ອະໄພ, ພະຍາຄຳມ້າວ, ທ່ານ ເລກີເຮືອງ, ເຊິ່ງແມ່ນສະເດັດເຈົ້າເພັດຊະລາດ ເປັນຜູ້ຊີ້ນຳຄືກັນ ເວົ້າວ່າຂຸນບູລົມ ທີ່ເປັນເຈົ້າຊີວິດຄົນທຳອິດຂອງເຊື້ອຊາດລາວໄທ ໄດ້ປົກຄອງ ນະຄອນໜອງແສ ຫລືນ່ານເຈົ້າ: ເອກະສານທີ່ສີ່ ເລື່ອງຂອງຊາດໄທ ທີ່ນັກປະຫວັດສາດໄທສະຫຍາມເປັນ ຜູ້ຄົ້ນຄວ້າກໍ່ເວົ້າເຖິງເມືອງໜອງແສແສນຍ່ານ, ນານ້ອຍອ້ອຍໜູ ແລະ ເມືອງແຖງ (ຫລື ເມືອງແຖນ) ແມ່ນຂຸນບູລົມເປັນຜູ້ປົກຄອງ; ເອກະສານທີ່ຫ້າ ໜັງສືພື້ນ ຂຸນບູລົມ ລາຊາທິລາດ ທີ່ກົມວັນນະຄະດີ ວຽງຈັນເປັນຜູ້ພິມແຕ່ປີ 1967 ກໍ່ລ້ວນແຕ່ເວົ້າວ່າຂຸນບູລົມ ເປັນລູກຂອງແຖນຫລວງຟ້າຄື່ນ ເຊິ່ງເປັນແຖນຜູ້ໜຶ່ງໃນຈຳນວນແຖນຫລາຍຄົນ ທີ່ຢູ່ເທິງເມືອງຟ້າ, ໄດ້ຖືກແຕ່ງຕັ້ງລົງມາປົກຄອງໂລກມະນຸດ, ອັນນີ້ກໍ່ເປັນຕາເຊື່ອຖືໄດ້ຍາກ; ເອກະສານທີ່ຫົກ ແມ່ນການຄົ້ນຄວ້າໄທເຫລົ້າເຈືອງ ແລະ ບ່ອນມາຕົ້ນຕໍຂອງຊົນເຜົ່າຂະມຸ ພ້ອມທັງຮີດຄອງປະເພນີຂອງເຂົາເຈົ້າ ໄດ້ໃຫ້ຮູ້ວ່າຊົນເຜົ່ານີ້ກໍ່ຄືຊົນເຜົ່າລາວເທິງອື່ນໆ ແມ່ນເຊື້ອຊາດຂອມ ທີ່ເປັນເຊື້ອຊາດປະສົມລະຫວ່າງເຊື້ອຊາດມອນ ແລະ ເຊື້ອຊາດຂະເໝນ; ບາງເອກະສານທີ່ຂ້າພະເຈົ້າໄດ້ອ່ານ ໄດ້ບອກໄວ້ວ່າ ຄົນຢູ່ໃນທະວີບອາຊີນີ້ ເກີດມາຈາກ 2 ປະເພດມະນຸດ ຄື ພວກໜຶ່ງ ເກີດມາຈາກປະເພດມະນຸດ ຊາວາ ທີ່ຢູ່ໃນປະເທດ ອິນໂດເນເຊຍ ແລະອີກພວກໜຶ່ງ ເກີດມາຈາກປະເພດມະນຸດປັກກິ່ງ ທີ່ມີຢູ່ໃນປະເທດຈີນ; ໃນເມື່ອພົບຄວາມຫຍຸ້ງຍາກທາງດ້ານເອກະສານແນວນັ້ນ ເຮົາຈຶ່ງລວມໝົດທຸກເອກະສານທີ່ໄດ້ຮູ້ແລ້ວ ເຕົ້າເອົາ ເພື່ອຂຽນຂຶ້ນມາເປັນປະຫວັດສາດຂອງ ຊາດລາວ ແລະ ຊາດພວນ ເວົ້າສະເພາະ ແລະ ປະຫວັດສາດຂອງຊາດ ໄຕ ຫລື ໄທ ທີ່ລວມມີຫລາຍ ໄທນຳກັນນັ້ນໃນເມື່ອເວົ້າລວມ.

ໃນເມື່ອເປັນດັ່ງນັ້ນ ໜັງສືປະຫວັດສາດເມືອງພວນ ທີ່ເຮົາໄດ້ພະຍາຍາມຄົ້ນຄິດມາຂຽນຂຶ້ນໃນເທື່ອນີ້ ມັນອາດຈະມີບ່ອນບໍ່ຖືກຕາມຄວາມເປັນຈິງ ແຕ່ໃນເມື່ອຕ້ອງການຂຽນໃຫ້ພີ່ນ້ອງຊາວພວນຮູ້ຈັກປະຫວັດສາດຂອງຕົນນັ້ນເຮົາຈຶ່ງໄດ້ສະຫລຸບເອົາເນື້ອໃນຂອງທຸກເອກະສານ ເອົ້າມາເປັນເລື່ອງທີ່ວິທະຍາສາດປະຕິເສດບໍ່ໄດ້ ໂດຍໄດ້ຮຽງຄວາມຕາມແຕ່ລະສະໄໝ ທີ່ສັງຄົມໄດ້ເກີດເປັນຂຶ້ນມາຢູ່ໃນທົ່ວເຂດແຄວ້ນ ອາຊີອາຄະເນ ຫລື ທົ່ວປະເທດລາວ ເວົ້າລວມ ແລະ ໃນເມືອງພວນເວົ້າສະເພາະ, ພໍເປັນບົດເລື່ອງໃຫ້ພີ່ນ້ອງຊາວພວນໄດ້ຮູ້ ແລະ ເຂົ້າໃຈການເປັນມາຂອງປະເທດຊາດຕົນ; ເຮົາຫວັງວ່າທ່ານຜູ້ອ່ານທັງຫລາຍຄົງຈະຊ່ວຍພິຈາລະນາ ແລະ ໃຫ້ອະໄພແກ່ເຮົາໃນເມື່ອການຂຽນລົງໄປນີ້ມັນບໍ່ຖືກກັບຄວາມເປັນຈິງ, ບໍ່ຖືກຕາມຄວາມເຂົ້າໃຈຂອງທ່ານຜູ້ຮູ້ທັງຫລາຍ ແລະ ບໍ່ຖືກຕາມສັງກາດ ປີ ເດືອນ ກໍ່ຕາມ ເຮົາເຂົ້າໃຈວ່າມີອັນໃຫ້ຄົນອ່ານເພື່ອຮູ້ເລື່ອງຂອງຕົນ ດີກວ່າບໍ່ມີ ແລະ ດີກວ່າຄວາມເລົ່າລືກັນ ທີ່ ສ່ວນຫລາຍມັກຊັກຈູງຄົນໄປເຖິງບ່ອນເຊື່ອຖືງົມງາຍ; ທ່ານນັກປາດ ຫລື ຜູ້ມີຄວາມຮູ້ທັງຫລາຍ ທາງດ້ານປະຫວັດສາດຂອງໂລກນີ້ ຫາກເຫັນບ່ອນຜິດພາດ ຫລື ບໍ່ພຽງພໍຂອງປຶ້ມຫົວນີ້ ຈົ່ງຊ່ວຍຄຳຄິດຄຳເຫັນໃຫ້ແກ່ເຮົາ ເພື່ອຈະຄົ້ນຄວ້າດັດແປງໃນບ່ອນທີ່ຈຳເປັນ, ເພາະວ່າຄືດັ່ງເຮົາໄດ້ເວົ້າມາເທິງນີ້ ການມີປຶ້ມປະຫວັດສາດທີ່ບໍ່ຖືກຕ້ອງພຽງພໍ ຄົງຈະເປັນອັນດີກວ່າ ການບໍ່ມີຫຍັງເລີຍ ເພາະມັນຈະປະປ່ອຍໃຫ້ ຄົນເຮົາຜູ້ບໍ່ຮູ້ຈັກແຕ່ຢາກຮູ້ຈັກເລື່ອງຂອງຕົນນັ້ນຫລົງໄປເຊື່ອຖືຢ່າງງົມງາຍ.

ວຽງຈັນ, ວັນທີ 4 ມີນາ 1993

ພູມີ ວົງວິຈິດ

247/VII
ຫ້າມຈຳໜ່າຍ

## ພາກທີໜຶ່ງ

# ການເວົ້າລວມໆ ເຖິງປະຫວັດສາດໃນອາຊີ ແລະ ອາຊີອາຄະເນ

ຢູ່ໃນອາຊີຕາເວັນອອກ ຫລື ເວົ້າໃຫ້ແຈ້ງແມ່ນຢູ່ໃນພາກໃຕ້ຂອງປະເທດຈີນ ຕັ້ງແຕ່ນົມໜົນເສສວນໄປຮອດນົມໜົນຮູນານ ມີຄົນເຜົ່າໄຕ ຫລື ໄທປະປົນກັນຢູ່ນຳພວກຫົ່, ຫານ, ເຈັກ, ຈີນ ທີ່ຕໍ່ສູ້ກັນດ້ວຍກັນອາວຸດເປັນປະຈຳ ເພື່ອຈະລວມປະເທດເປັນອັນໜຶ່ງອັນດຽວກັນ ຢູ່ພາຍໃຕ້ການປົກຄອງຂອງຜູ້ຊະນະ. ຊົນເຜົ່າໄທ ດັ່ງກ່າວນັ້ນ ລ້ວນແຕ່ເກີດອອກມາຈາກເຊື້ອສາຍມະນຸດປັກກິ່ງ ແລະ ປະກອບດ້ວຍ ໄທພວນ, ໄທລາວ, ໄທລື້, ໄທຍວນ, ໄທຈວາງ, ໄທໂຖ, ໄທເໜືອ, ໄທດຳ, ໄທແດງ, ໄທຂາວ, ໄທເຂີນ, ໄທກູລາ, ໄທອະຫົມ, ໄທສານ, ໄທເໝີ້ຍ, ໄທຍ້, ໄທແດງ, ໄທລະວ້າ, ໄທສະຢ້າວ, ໄທກໍ້, ໄທກຸ້ຍ, ໄທລານແຕນ, ໄທມູເຊີ ແລະ ອື່ນໆ, ແຕ່ລະຊົນເຜົ່າປົກຄອງກັນແບບເຈົ້າໂຄດ ຫລື ເຈົ້າກົກ ເຈົ້າເຫລົ່າທີ່ມີການພົວພັນກັນຢ່າງໃກ້ຊິດ ແຕ່ຫາກບໍ່ຂຶ້ນກັບກັນ, ຊົນເຜົ່າໄທ ແຈກຢາຍກັນຢູ່ ທົ່ວພາກໃຕ້ຂອງຈີນ ແລະ ມັກປາກພາສາຄ້າຍຄືກັນ ແຕ່ສຳນຽງຕ່າງກັນ, ບາງຄວາມກໍ່ເອົາພາສາຈີນມາໃຊ້ເຊັ່ນ ການນັບຕັ້ງແຕ່ໜຶ່ງໄປເຖິງສິບ ຫລື ການເອີ້ນ ຊ້າງ ແລະ ມ້າ ເປັນຕົ້ນ. ຫລັກຖານອັນໜຶ່ງທີ່ຢັ້ງຢືນໃຫ້ເຫັນວ່າ ມີຊົນເຜົ່າໄທຢູ່ນົມໜົນຮູນານ ແມ່ນການຄົ້ນພົບປ່າຊ້າແຫ່ງໜຶ່ງຢູ່ໃນນົມໜົນນີ້ວ່າ ມີຂຸມຝັງສົບຂອງແມ່ຍິງທີ່ໜັງສືຈີນຂຽນໄວ້ວ່າ ແມ່ນເມຍຂອງເຈົ້າໄຕ ເກົ້າຜົມນຸ່ງເສື້ອ ແລະ ສິ້ນໄໝຄືກັນກັບຄົນລາວ ແຕ່ຫາກວ່າໄດ້ຝັງຢູ່ທີ່ນັ້ນໄດ້ 4 ໝື່ນປີມາແລ້ວ. ໃນເມື່ອຊົນເຜົ່າຕ່າງໆຂອງຈີນຕີກັນນັ້ນ ບາງຄັ້ງບາງຄາວຊົນເຜົ່າໄທກໍ່ໄດ້ເຂົ້າຮ່ວມນຳ ເພື່ອຮັກສາດິນແດນຂອງຕົນໄວ້, ແຕ່ສ່ວນຫລາຍແມ່ນເອົາຕົວອອກຫ່າງ, ຫຍັບເຂົ້າໄປໃກ້ຊົນເຜົ່າໄທດ້ວຍກັນຊັກໄຊ້ ຈົນວ່າທ້າຍສຸດ ໄດ້ໄປໂຮມກັນຢູ່ແຄມໜອງແສ ໃນນົມໜົນຮູນານຂອງຈີນ ແລະ ເອີ້ນທີ່ນັ້ນວ່າເປັນນະຄອນນ່ານເຈົ້າໂດຍແມ່ນຂຸນບູລົມເປັນຜູ້ປົກຄອງ, ແຕ່ພວກເຮົາບໍ່ອາດສາມາດຮູ້ໄດ້ວ່າຂຸນບູລົມເປັນລູກຂອງໃຜ ແລະ ບໍ່ເປັນໜ້າເຊື່ອວ່າເປັນລູກພະຍາແຖນ ລົງມາແຕ່ຟ້າ, ເຮົາເຫັນວ່າຄົງຈະແມ່ນພວກໄຕ ຫລື ໄທນຳກັນເລືອກຕັ້ງເອົາເອງ; ຂຸນບູລົມປົກຄອງນ່ານ ເຈົ້າໂດຍໃຊ້ຕົວໜັງສືສັນສະກິດ ເປັນພາຫະນະເພື່ອຂຽນກົດໝາຍ, ໝາຍແຕ່ງຕັ້ງ ຫລື ຄຳສັ່ງຕ່າງໆ; ພາສາສັນສະກິດນີ້ເປັນພາສາຂອງຊົນເຜົ່າໜຶ່ງທີ່ຢູ່ພາກເໜືອຂອງປະເທດອິນເດຍ ເຊິ່ງສາສະໜາພາມ ໄດ້ເອົາເຂົ້າມາໃຊ້ເພື່ອເຜີຍແຜ່ສາສະໜານີ້ອອກໄປທົ່ວອາຊີ ແລະ ອາຊີອາຄະເນໃນສະໄໝກ່ອນພຸດທະການ 3 ສະຕະວັດ ແລະ ກ່ອນຄິດຕະສັງກາດປະມານ 4 ສະຕະວັດ; ບາງເອກະສານເວົ້າວ່າ ແມ່ນ ນັກບວດສາສະໜາພາມຊື່ ໂກນທັນຍະ ເປັນຜູ້ເອົາມາເຜີຍແຜ່.

ບາງເອກະສານເວົ້າວ່າ ນະຄອນນ່ານເຈົ້າ ປະກອບດ້ວຍ 6 ເມືອງຄື: ເມືອງມົ້ງສຸ້ຍ, ເມືອງເອັ້ນເຊ, ເມືອງລານກົງ, ເມືອງເທັງຊຽງ, ເມືອງຊີ້ຈາງ ແລະ ເມືອງມົ້ງເຊ; ເຮົາເຫັນວ່າຊື່ເມືອງດັ່ງກ່າວນັ້ນໃສ່ຊື່ຂອງຈີນ ແຕ່ບໍ່ຮູ້ວ່າພາສາໄຕ ຫລື ໄທ ເອີ້ນກັນວ່າແນວໃດ, ເຮົາພໍເດົາໄດ້ແຕ່ວ່າ ເມືອງມົ້ງເຊ ອາດຈະແມ່ນເມືອງໜອງແສ; ເຊິ່ງຈີນເອີ້ນວ່າຕາລີຟູ ເປັນເມືອງໃຫຍ່ກວ່າໝູ່ ແລະ

ເປັນນະຄອນຫລວງຂອງນະຄອນນ່ານເຈົ້າ; ນັກປະຫວັດສາດຝຣັ່ງຄົນໜຶ່ງກໍ່ໄດ້ຢືນຢັນຄວາມເວົ້າອ້າງບົນນີ້. ໃນນະຄອນນ່ານເຈົ້າ ເພິ່ນໄດ້ແບ່ງປະຊາຊົນ ອອກເປັນ 3 ເຜົ່າໃຫຍ່ຄື ເຜົ່າທີ່ໜຶ່ງເອີ້ນວ່າ ເຜົ່າອ້າຍລາວ ເພາະເປັນເຜົ່າທີ່ໃຫຍ່ ແລະ ປະກອບດ້ວຍຫລາຍຊົນເຜົ່ານ້ອຍກວ່າເພິ່ນ, ເຜົ່າທີ່ສອງເອີ້ນວ່າ ເຜົ່າພວນ ກໍ່ປະກອບດ້ວຍຫລາຍຊົນເຜົ່າຄືກັນ ແຕ່ຫາກນ້ອຍກວ່າຊົນເຜົ່າອ້າຍລາວ, ຊົນເຜົ່າທີ່ສາມ ແມ່ນຊົນເຜົ່າມົ້ງ ທີ່ປະກອບດ້ວຍຫລາຍຊົນເຜົ່ານ້ອຍແຕ່ຫາກມີຈຳນວນໜ້ອຍກວ່າເພິ່ນ; ຊົນເຜົ່າອ້າຍລາວ ແລະ ຊົນເຜົ່າພວນ ທຳມາຫາກິນດ້ວຍການເຮັດນາ, ປູກເຂົ້າ ແລະ ລ້ຽງສັດ, ສ່ວນຊົນເຜົ່າມົ້ງນັ້ນມັກມ້າງປ່າເຮັດໄຮ່ເພື່ອປູກເຂົ້າ ແລະ ລ້ຽງສັດຄືກັນ.

## ພາກທີສອງ

# ການຂະຫຍາຍຕົວຂອງບັນດາຊົນເຜົ່າ ທີ່ກໍ່ກຳເນີດມາຈາກມະນຸດຊາວາ

ໃນເວລາທີ່ຊົນເຜົ່າໄຕ ຫລື ໄທ ມີການເຄື່ອນໄຫວຢູ່ໃນພາກໃຕ້ຂອງຈີນນັ້ນ, ຢູ່ໃນພາກອາຊີອາຄະເນ ມີພວກຊົນເຜົ່າທີ່ອອກມາຈາກມະນຸດຊາວາ ຂະຫຍາຍຂຶ້ນມາຢູ່ໃນທົ່ວອາຊີອາຄະເນ; ຊົນເຜົ່າເຫລົ່ານັ້ນ ປະກອບດ້ວຍຊົນເຜົ່າມອນ, ຊົນເຜົ່າຂະເໝນ ແລະ ຊົນເຜົ່າລາວເທີງ ທີ່ລວມກັນເອີ້ນເປັນຊົນຊາດຂອມ; ຊົນເຜົ່າມອນ ແລະ ຊົນເຜົ່າຂະເໝນມີໜັງສືຂອງຕົນເອງ ທີ່ຊົນຊາດຂອມເອົາມາປະສົມກັນ ເອີ້ນເປັນຕົວໜັງສືຂອມ ທີ່ໃຊ້ກັນຢູ່ໃນເຂດລະເວນ ແລະ ລະແວ ຂອງພາກໃຕ້ລາວ; ຊົນຊາດຂອມນີ້ ທັງຝາກນ້ຳຂອງຕາເວັນຕົກໄດ້ຄວບຄຸມດິນແດນຂຶ້ນໄປຮອດເມືອງຊຽງໃໝ່, ສ່ວນພາກຕາວັນອອກຂອງແມ່ນ້ຳ ຂອງໄດ້ຄວບຄຸມດິນແດນລະຫວ່າງແມ່ນ້ຳຂອງກັບສາຍພູຫລວງຂຶ້ນໄປຈົນຮອດພາກເໜືອຂອງລາວ; ໃນ ສະຕະວັດດຽວກັນ ຄືດັ່ງເວົ້າຢູ່ເທິງນີ້ຊົນຊາດຂອມກໍ່ໄດ້ຮັບອິດທິພົນຂອງສາສະໜາພາມຄືກັນ ແຕ່ຫາກບໍ່ເອົາໜັງສືສັນສະກິດມາເປັນໜັງສືຂອງຕົນເພາະເຂົາເຈົ້າກໍ່ມີໜັງສືຂອງຕົນເອງແລ້ວ; ຊົນເຜົ່າຂອມປົກຄອງ ພາກຕາວັນຕົກຂອງແມ່ນ້ຳຂອງຂຶ້ນໄປ ກໍ່ຕັ້ງເປັນເມືອງຕ່າງໆຂຶ້ນ ແລະ ໄດ້ກໍ່ວັດວາອາຮາມ ແລະ ເຈດີ ຂອງສາສະໜາພາມຂຶ້ນຕາມຮູບຊົງຂອງສິ່ງກໍ່ສ້າງຂອງປະເທດອິນໂດເນເຊຍ ເຊັ່ນ ວັດຂອງນະຄອນປະຖົມ, ຂອງເມືອງອະຢຸດທະຍາຂອງເມືອງລົບບູລີຕາມແບບທີ່ພວກເຂົາກໍ່ຂຶ້ນຢູ່ໃນເມືອງອັງກໍໂທມ ແລະ ອັງກໍວັດ ຂອງປະເທດກຳປູເຈຍດຽວນີ້, ວັດພູຢູ່ພາກໃຕ້ຂອງລາວ ແລະ ທາດຕ່າງໆຢູ່ພາກກາງຂອງຫວຽດນາມ; ພວກຂອມກໍ່ມີຄວາມສີວິໄລສູງຜົສົມຄວນແລະ ໄດ້ປົກປັກຮັກສາດິນແດນຂອງຕົນຈາກການຮຸກຮານຂອງພາຍນອກເລື້ອຍມາ.

ໜຶ່ງສະຕະວັດ ຫລັງຈາກກຳເນີດພຸດທະສາສະໜາຢູ່ພາກເໜືອຂອງອິນເດຍ. ພະຍາອະໂສກະມະຫາລາດ ເຊິ່ງເມື່ອກ່ອນນີ້ໄດ້ຖືສາສະໜາມຸດສະລິມໄດ້ກັບໃຈປະສາສະໜານັ້ນມາຖືພຸດທະສາສະໜາ ນິກາຍມະຫາຍານ ແລະ ໄດ້ບັງຄັບປະຊາຊົນອິນເດຍໃຫ້ປະສາສະໜາມຸດສະລິມມາຖືສາສະໜາຄືດຽວກັນ, ຜູ້ໃດບໍ່ຍອມປະສາສະໜາມຸດສະລິມພະຍາອະໂສກະມະຫາລາດກໍ່ໄດ້ສັ່ງໃຫ້ໜີຈາກປະເທດອິນເດຍ, ຍ້ອນແນວນັ້ນ ຊາວອິນເດຍ ທີ່ຖືສາສະໜາມຸດສະລິມເປັນຕົ້ນແມ່ນພວກທີ່ຢູ່ໃນຂົງເຂດອ່າວບັງການ ຈຶ່ງໄດ້ພາກັນອົບພະຍົບຫລັ່ງໄຫລກັນລົງມາຢູ່ຕາມແຄມທະເລ ໃນປະເທດພະມ້າ, ປະເທດໄທສະຫຍາມ, ປະເທດຂະເໝນ, ປະເທດມາເລຊີ ແລະ ປະເທດອິນໂດເນເຊຍ. ພະຍາອະໂສກະມະຫາລາດ ໄດ້ເອົາພາສາ ແລະ ຕົວໜັງສືຊາວມະຄົດທີ່ຢູ່ພາກເໜືອຂອງອິນເດຍຄືດຽວກັນມາເປັນໜັງສືຂອງພຸດທະສາສະໜາ ເຊິ່ງພວກເຮົາເຫັນຢູ່ໃນໜັງສືທຳໃນຜູກໃບລານທີ່ພວກເຮົາເຫັນຢູ່ດຽວນີ້ໂດຍແມ່ນພະສົງມະຫາຍານ ເອົາເຂົ້າມາປະເທດລາວ ໂດຍຜ່ານປະເທດພະມ້າ; ໜັງສືອັນນີ້ຈຶ່ງໄດ້ຖືກປັບປຸງ ແລະ ໄດ້ກາຍມາເປັນໜັງສືພະມ້າ ແລະ ໜັງສືຊົນເຜົ່າລື້ທີ່ພວກເຮົາເຫັນຢູ່ດຽວນີ້; ສ່ວນໜັງສືສັນສະກິດທີ່ເຂົ້າ ມາລາວກ່ອນແລ້ວນັ້ນຍັງຄົງຄ້າງຢູ່ນຳຊົນເຜົ່າໄທດຳ ແລະ ໄທແດງທີ່ບໍ່ຖືສາສະໜາພຸດຈົນເຖິງປະຈຸບັນນີ້.



ຊ່ວຍກັນໃນລະດູເກັບກ່ຽວ ແຂວງຊຽງຂວາງ
ຮູບຖ່າຍ ປີ 2009

## ພາກທີ່ສາມ

# ການຂະຫຍາຍຕົວຂອງຊົນເຜົ່າ ທີ່ອອກມາຈາກມະນຸດປັກກິ່ງ.

ຄືດັ່ງເວົ້າຢູ່ຂ້າງບົນນີ້ ຊົນເຜົ່າຕ່າງໆຂອງຈີນຮົບເລວກັນຢ່າງບໍ່ຢຸດຢັ້ງ ເພື່ອຈະສ້າງລະບອບສັກດີນາລວມສູນ; ໃນເວລານັ້ນ ຊົນເຜົ່າໄຕ ຫລື ໄທຕ່າງໆໄດ້ຄ່ອຍໆຍ້າຍໜີເຂົ້າໄປລວມກັນຢູ່ໃນນະຄອນນ່ານເຈົ້າ; ໃນເວລາດຽວກັນນັ້ນຄົນຈີນທີ່ໄດ້ໄຊຊະນະຈາກຫລາຍທ້ອງຖິ່ນແລ້ວກໍ່ຍັງເຫລືອແຕ່ 3 ເຈົ້າຄື: ເຈົ້າໜຶ່ງທີ່ຜູ້ນຳເອີ້ນວ່າ ໂຈໂສ, ຜູ້ອອກໜ້າຕໍ່ສູ້ແມ່ນຂົງເບັ້ງ, ເຈົ້າທີ່ສອງເອີ້ນວ່າເລົ່າປີ ເຊິ່ງຜູ້ອອກໜ້າຕໍ່ ສູ້ແມ່ນກວນອູ, ເຈົ້າທີ່ສາມ ເອີ້ນວ່າ ກວນຮຸຍ ຜູ້ອອກໜ້າຕໍ່ສູ້ແມ່ນຊຸນກວນ, ເຊິ່ງທັງໝົດນີ້ ພົງສາວະດານຈີນເອີ້ນວ່າ ສະໄໝສາມກົກ ທີ່ຕີກັນເປັນເວລາເຫິງນານ ຕັ້ງແຕ່ເມືອງເສສວນລົງມາຮອດ ຄົນລະຟາກນ້ຳຢາງເຊກຽງທ້າຍສຸດພວກໂຈໂສ, ຂົງເບັ້ງ ເປັນຝ່າຍຊະນະກໍ່ໄດ້ອົບພະຍົບອອກຈາກນະຄອນຈຸງກິງ ຂຶ້ນໄປຕັ້ງຢູ່ປັກກິ່ງ ເພື່ອປົກຄອງໝົດທັງປະເທດຈີນ; ພວກທີ່ປະລາໄຊກໍ່ໄດ້ແຕກໜີກະຈັດກະຈາຍປະທະຫານຂອງຕົນໄວ້ຢ່າງບໍ່ເປັນລະບຽບ, ທະຫານພວກນີ້ ພ້ອມທັງພາກສ່ວນໜຶ່ງຂອງທະຫານໂຈໂສ, ຂົງເບັ້ງ ທີ່ບໍ່ມີຜູ້ບັງຄັບບັນຊາ ໄດ້ທ່ຽວໂລະປຸ້ນກິນຢູ່ນຳທ້ອງຖິ່ນເຫລົ່ານັ້ນ ແລະ ກໍ່ໄດ້ລົງມາປຸ້ນສະດົມຮອດນະຄອນນ່ານເຈົ້າເຮັດໃຫ້ຊົນເຜົ່າໄຕ ຫລື ໄທຕ່າງໆຢູ່ບໍ່ເປັນສຸກ; ຂຸນບູລົມ ໄດ້ຍ້າຍມາຕັ້ງນະຄອນຫລວງຢູ່ເມືອງໜຶ່ງທາງພາກໃຕ້ທີ່ເອີ້ນວ່າ ເມືອງກາຫລົງອັນກາຍມາເປັນເມືອງຊຽງຮຸ່ງຂອງແຄວ້ນສິບສອງພັນນາດຽວນີ້; ແຕ່ທະຫານຈີນທີ່ບໍ່ມີລະບຽບດັ່ງກ່າວນັ້ນ ຍັງຕິດຕາມໄລ່ປຸ້ນກັນມາເລື້ອຍໆ, ຫລັງຈາກຂຸນບູລົມໄດ້ເຖິງແກ່ກຳໄປແລ້ວ ຂຸນລໍຜູ້ເປັນອ້າຍກົກ ໄດ້ຖອຍລົງມາຕັ້ງເມືອງຢູ່ນານ້ອຍອ້ອຍໜູ ທີ່ເອີ້ນວ່າ ເປັນເມືອງແຖງ ຫລື ເມືອງແຖນຢູ່ໃນເຂດສິບສອງ ຈຸໄທ (ດິນຫວຽດນາມ) ປະຈຸບັນນີ້.

ມາໃນສະໄໝນີ້ເປັນສະໄໝທີ່ຊົນເຜົ່າໄຕ ຫລື ໄທແຕກແຍກກັນໄປຢູ່ຄົນລະທິດລະທາງ, ຊົນເຜົ່າໄທລື້ພາກສ່ວນໃຫຍ່ແມ່ນຕັ້ງຢູ່ແຄວ້ນສິບສອງພັນນາ, ຊົນເຜົ່າສານ ໄດ້ແຕກໜີໄປຢູ່ແຄວ້ນອະສຳຢູ່ໃນ ພາກຕາວັນອອກດິນແດນປະເທດອິນເດຍ, ຊົນເຜົ່າອະຫົມໄດ້ແຕກໜີໄປຢູ່ພາກຕາວັນອອກຂອງດິນແດນພະມ້າທີ່ເອີ້ນວ່າໄທອະຫົມ, ພວກໄທຈວາງໜີໄປຢູ່ຕາມຊາຍແດນພາກໃຕ້ຂອງປະເທດຈີນດຽວນີ້, ຊົນເຜົ່າ ໄທໂຖໄດ້ແຕກໜີໄປຢູ່ພາກຕາວັນອອກສ່ຽງເໜືອຂອງປະເທດຫວຽດນາມ, ນອກຈາກນັ້ນ ກໍ່ໄດ້ຫລັ່ງໄຫລ ກັນລົງມານຳທ້າວຂຸນລໍ ແລະ ຂຸນເຈືອງທີ່ມາຕໍ່ສູ້ກັບຊົນຊາດຂອມທີ່ຢູ່ໃນພາກເໜືອຂອງລາວ ແລະ ຂອງປະເທດໄທດຽວນີ້; ເມື່ອໄດ້ຮັບການຊ່ວຍເຫລືອສະໜັບສະໜູນຈາກຊົນເຜົ່າໄທລາວ ແລະ ໄທພວນຊົນເຜົ່າໄທຍວນ ໄດ້ໄປຄອບຄອງເອົາດິນແດນຊຽງໃໝ່, ລຳພູນ, ລຳປາງ, ຊຽງຮາຍ ແລະ ພະເຢົາ, ຊົນເຜົ່າລະວ້າໄດ້ໄປຍຶດເອົາພາກກາງທີ່ເອີ້ນວ່າ ຈັງຫວັດລົບບູລີດຽວນີ້, ຊົນເຜົ່າໄທສະຫຍາມຮ່ວມກັນກັບຊົນເຜົ່າໄທຍວນ, ໄທລະວ້າ, ໄທລາວແລະໄທພວນໄດ້ພ້ອມກັນຕີຊຸຊົນເຜົ່າຂອມໃຫ້ຖອຍລົງ ໄປເທື່ອລະເລັກລະນ້ອຍ ຈົນຍັງເຫລືອຢູ່ແຕ່ໃນດິນແດນຂະເໝນ

ແລະ ພາກໃຕ້ຂອງລາວ; ສ່ວນຊົນເຜົ່າ ຂອມທີ່ເອີ້ນວ່າ ລາວເທິງບໍ່ໄດ້ອົບພະຍົບໜີລົງໄປຈຶ່ງຍັງຄ້າງຄາຢູ່ຕາມສາຍພູຫລວງພາກຕາເວັນອອກ ຂອງປະເທດລາວ.

ໃນເວລາທີ່ຊົນເຜົ່າໄທລາວ, ໄທຍວນ, ໄທລະວ້າ ແລະ ໄທພວນບໍ່ທັນໄດ້ລົງມາຮອດພາກເໜືອຂອງລາວນັ້ນ ຊົນເຜົ່າຂະມຸໄດ້ປົກຄອງຕັ້ງແຕ່ແຂວງບໍ່ລິຄຳໄຊຂຶ້ນໄປຮອດແຂວງນ້ຳທາ; ຜູ້ປົກຄອງຊາວຂະມຸແມ່ນຜູ້ທີ່ເອີ້ນວ່າ ທ້າວ ຍີ ໃຫຍ່ມາໄດ້ປຽນຊື່ມາເປັນທ້າວຮຸ່ງ ແລະ ໄດ້ມີອຶດທິພົນປົກຄອງຊາວຂະມຸແລ້ວ ທ້າວ ຮຸ່ງ ກໍ່ໄດ້ປຽນຊື່ມາເປັນ ເຈືອງຕາມເຮົາເອງ ໄດ້ຈື່ຄວາມເວົ້າຂອງພວກຜູ້ເຖົ້າລາວເທິງທີ່ຮູ້ເລື່ອງປະຫວັດຂອງເຂົາເຈົ້າເອງ ແລະ ເຫລົ່າຕໍ່ສອງເຊື້ອຍນ້ອງນາງສາວໂກລານີ (ຄົນຝຣັ່ງ) ທີ່ເປັນສາດສະດາຈານ ດ້ານປະຫວັດສາດ ແລະ ວັດຖຸບູຮານ ແລະ ໄດ້ມາຂຸດຄົ້ນເພື່ອສະຫລຸບເບິ່ງຄວາມຈິງຂອງໄທເຫລົ້າເຈືອງ ແລະ ຂອງປະຫວັດຂອງທ້າວ ເຈືອງນັ້ນມາທ້າວເຈືອງນີ້ເກີດຢູ່ພູຍວນ (ພາກເໜືອຂອງແຂວງຊຽງຂວາງ) ເປັນລູກຂອງທ້າວ ບານົດ ແລະ ນາງອີແກ້ວ ມີອ້າຍຜູ້ໜຶ່ງຊື່ວ່າທ້າວ ບາກວາ; ທ້າວ ຍີ, ທ້າວ ຮຸ່ງ ຫລື ທ້າວເຈືອງນີ້ຕາມເຂົາເຈົ້າເວົ້າວ່າ ເປັນຄົນສະຫລາດຫລັກແຫລມ ຮູ້ຂຸດເອົາເຫລັກຢູ່ພູຍວນອອກມາສ້າງສາດຕາອາວຸດ, ເຝິກແອບກອງທະຫານ ແລະ ແຕ່ງຕັ້ງລູກນ້ອງຂອງຕົນເປັນນາຍທະຫານ ມີທ້າວ ບາກວາໃຫ້ຮັກສາຂອງ ເຂດຊຽງຂວາງ, ທ້າວ ບາກອງ, ບາທອງ ແລະ ບາກ່ຳ ໃຫ້ຮັກສາທ້ອງຖິ່ນຕ່າງໆ ແຕ່ແຂວງຊຽງຂວາງຂຶ້ນຮອດແຂວງນ້ຳທາ, ທ້າວບາກອງ ແລະ ທ້າວແອງກາໃຫ້ໄປນຳທ້າວເຈືອງເພື່ອ ຄຸມກອງທະຫານໄປຕີເອົາເມືອງເງິນຍາງ (ຊຽງແສນດິນໄທດຽວນີ້) ແລະ ຕີລົງໄປຮອດເມືອງພະເຢົາ; ໄປຮອດທີ່ນັ້ນທ້າວ ຮຸ່ງໄດ້ພົບກັບນາງ ວ້ອມ ລູກເຈົ້າເມືອງພະເຢົາ, ໄດ້ມັກຮັກກັນແລະ ໄດ້ແຕ່ງເອົາ ນາງວ້ອມເປັນພັນລະຍາ ແລ້ວກໍ່ໄດ້ພາເມຍກັບຄືນມາຢູ່ເມືອງກັດ (ທີ່ແມ່ນໂພນສະຫວັນດຽວນີ້) ໂດຍປະໃຫ້ລູກນ້ອງປົກຄອງດິນແດນເມືອງເງິນຍາງ ແລະ ເມືອງພະເຢົາທີ່ຕົນຕີເອົາໄດ້ ແລ້ວກໍ່ສືບຕໍ່ປ້ອງກັນດິນ ແດນຂອງຕົນທີ່ຖືກຮຸກຮານຈາກພາກເໜືອເປັນເມືອງນົດ. ທ້າວເຈືອງໄດ້ອອກໄປສູ້ຮົບກັບກອງທະຫານ ທີ່ລົງມາຈາກດິນຫວຽດນາມກໍ່ເສຍຕາຍຢູ່ໃນສະໜາມຮົບ; ເມື່ອຮູ້ຂ່າວວ່າ ທ້າວເຈືອງເສຍຊີວິດແລ້ວ ບາກວາ, ທ້າວແອງກາ ແລະ ລູກນ້ອງຜູ້ອື່ນກໍ່ໄດ້ເຂົ້າສະຫວາມີພັກຕໍ່ກອງກຳລັງຂອງທ້າວຂຸນລໍ ແລະ ຂຸນເຈືອງ; ໄຊຊະນະຂອງຜູ້ນຳລາວໄທດັ່ງກ່າວນັ້ນໄດ້ສ້າງເງື່ອນໄຂໃຫ້ຊົນເຜົ່າໄຕ ຫລື ໄທ ຖອຍໜີຈາກ ນະຄອນນ່ານເຈົ້າ, ນະຄອນກາຫລົງ ແລະເມືອງແຖງ (ຫລືເມືອງແຖນ) ລົງມາຕັ້ງຢູ່ໃນດິນແດນສອງຝັ່ງແມ່ນ້ຳຂອງ. ຊົນເຜົ່າໄທລາວທີ່ຢູ່ພາຍໃຕ້ການບັນຊາຂອງທ້າວຂຸນລໍ ໄດ້ຕັ້ງຢູ່ເມືອງຊຽງດົງ ຊຽງທອງ (ເຊິ່ງແຕ່ກ່ອນເອີ້ນວ່າເມືອງຊວາອັນແມ່ນຫລວງພະບາງດຽວນີ້) ແລ້ວກໍ່ຂະຫຍາຍຂ້າມໄປຮອດຂອບເຂດ ດິນແດນຂອງໄທຍວນ, ໄທສະຫຍາມ ແລະ ໄທລະວ້າ ຍຶດເອົາໄດ້ຕັ້ງແຕ່ຫລວງພະບາງຂຶ້ນຮອດຝັ່ງສາລີ ທາງພາກເໜືອ ແລະລົງມາຮອດວຽງຈັນໃນພາກໃຕ້; ຊົນເຜົ່າໄທພວນ ພາຍໃຕ້ການບັນຊາຂອງຂຸນ ເຈືອງໄດ້ຕົກລົງກັບທ້າວຂຸນລໍແລະຍົກສີພົນຂອງຕົນມາຕັ້ງຢູ່ແຂວງພວນ. ຂຸນເຈືອງໄດ້ໃຊ້ພວກລູກນ້ອງຂອງທ້າວເຈືອງແຕ່ກ່ອນທີ່ສະແດງຄວາມສັດຊື່ບໍລິສຸດຕໍ່ຕົນນັ້ນໃຫ້ລົງມາຊອກບ່ອນຈະຕັ້ງເມືອງຫລວງຢູ່ໃນແຂວງພວນ; ເຂົາເຈົ້າໄດ້ເອົາຊ້າງ 4 ຕົວ ຊ້າງຜູ້ 2 ຕົວ ແລະ ຊ້າງແມ່ 2 ຕົວ ເຮັດພິທີບວງສວງ ຖວາຍ

ເທວະດາແລ້ວສັ່ງຊ້າງນັ້ນລົງມາຊອກບ່ອນຕັ້ງເມືອງ ໂດຍເວົ້າວ່າ ຊ້າງຜູ້ນອນລົງບ່ອນໃດໃຫ້ຖືວ່າບ່ອນນັ້ນເປັນຫົວເມືອງ ແລະ ຊ້າງແມ່ນອນລົງບ່ອນໃດບ່ອນນັ້ນເປັນຫາງເມືອງ. ເມື່ອເດີນທາງມາຫລາຍສິບປີແລ້ວ ຊ້າງຜູ້ສອງຕົວກໍ່ໄດ້ນອນລົງແຄມນ້ຳງື່ມ. ສ່ວນຊ້າງແມ່ສອງຕົວນັ້ນຍັງສືບຕໍ່ເດີນໄປ ຮອດແຄມນ້ຳກັ່ງ ກໍ່ນອນລົງທີ່ນັ້ນ ເຂົາເຈົ້າຈຶ່ງຕົກລົງເອົາດິນແດນລະຫວ່າງນັ້ນເປັນນະຄອນຫລວງຂອງ ເມືອງພວນ ໂດຍໃສ່ຊື່ວ່າ ເມືອງຊ້າງຂວາງ; ເມື່ອທ້າວ ແອງກາໄປລາຍງານຕໍ່ຂຸນເຈືອງແລ້ວຈຶ່ງເອົາຊາວພວນທັງໝົດລົງມາຢູ່ທີ່ແຂວງພວນ. ມາຮອດແລ້ວກໍ່ໄດ້ເຮັດພິທີສະຫລອງໄຊຊະນະທັງກາງເວັນ ແລະ ກາງຄືນເປັນເວລາ 3 ເດືອນ ຢູ່ໃນທົ່ງນາແຫ່ງໜຶ່ງຈົນວ່າຜູ້ບ່າວຜູ້ສາວຫລິ້ນກັນເຖິງນານລູກ ຈຶ່ງເອີ້ນທົ່ງນານັ້ນວ່າ ນາສາວນານ ເຊິ່ງກາຍມາເປັນນາຊະນານຢູ່ໃນປະຈຸບັນນີ້; ໃນເວລາສະຫລອງໄຊນັ້ນ ຂຸນເຈືອງໄດ້ຍົກຕົນເອງຂຶ້ນເປັນຂຸນເຈັດເຈືອງ ເພາະວ່າເອົາຊະນະທ້າວເຈືອງໄດ້ແລ້ວກໍ່ຍົກເມືອງຂຶ້ນ ເປັນເມືອງຊຽງຂວາງ ແລະ ໝົດທັງແຂວງພວນໃຫ້ເອີ້ນວ່າແຂວງຊຽງຂວາງ ເພາະມີເຈົ້າປົກຄອງຢ່າງ ເປັນເອກະລາດ. ແລ້ວກໍ່ໃຫ້ຄົນໄປຕັດໄມ້ ແລະ ຫາເຄື່ອງທີ່ຈຳເປັນ ມາປຸກເຮືອນໃສ່ຄຸ້ມບ່ອນມີດິນພຽງອັນກວ້າງຂວາງ (ເຊິ່ງເປັນສະໜາມກິລາເຕະບານໃນເວລານີ້) ແລະ ໃຫ້ລູກນ້ອງລົງໄປປຸກເຮືອນຢູ່ລະຫວ່າງ ຄຸ້ມເຈົ້າເຈັດເຈືອງນັ້ນໄປຫານ້ຳງື່ມ ໂດຍເອີ້ນບ້ານນັ້ນວ່າເປັນບ້ານໃຕ້ຄຸ້ມ.



ຕາດຄະ ແຂວງຊຽງຂວາງ
ຮູບຖ່າຍ ປີ 2010

## ພາກທີສີ່

# ການປົກຄອງບ້ານເມືອງຂອງທ້າວເຈັດເຈືອງ

ເມື່ອຈັດຕັ້ງບ້ານເມືອງຂຶ້ນຮຽບຮ້ອຍແລ້ວ ທ້າວເຈັດເຈືອງ ກໍ່ໄດ້ວາງລະບຽບກົດໝາຍຕາມແບບທີ່ຂຸນບູລົມໄດ້ວາງໄວ້ໃນນະຄອນນ່ານເຈົ້າ ໂດຍແບ່ງດິນແດນອອກເປັນບ້ານ, ເປັນເມືອງ ແລະ ເປັນລາຊະອານາຈັກພວນ ແລ້ວກໍ່ໄດ້ແຕ່ງໃຫ້ທ້າວແອງກາ ແລະ ທ້າວບາກວາ ໄປຮ່ວມກັບເຈົ້ານາຍທີ່ເປັນລູກນ້ອງຂອງຂຸນລໍ ເພື່ອເປັນເສັ້ນເຂດແດນລະຫວ່າງລາຊະອານາຈັກຫລວງພະບາງ ແລະ ລາຊະອານາຈັກພວນ ແລະ ແຕ່ງດອງເອົາລູກທ້າວ ແອງກາເປັນພັນລະຍາສືບຕໍ່ປົກຄອງບ້ານເມືອງຢ່າງມີຄວາມສະຫງົບ.

ເຈົ້າເຈັດເຈືອງ ມີພະລາຊະໂອລົດອົງໜຶ່ງ ໂດຍໃຫ້ພະນາມວ່າ ເຈົ້າເຈັດຈອມ; ເມື່ອເຈົ້າເຈັດເຈືອງ ເຖິງແກ່ກຳໄປແລ້ວ ກໍ່ແມ່ນເຈົ້າເຈັດຈອມໄດ້ຂຶ້ນຄອງລາຊະສົມບັດ; ເຈົ້າເຈັດຈອມໄດ້ໄປຢ້ຽມຢາມປະຊາຊົນທີ່ລຽບຢູ່ຕາມເຂດນໍ້າດິນແດນ ເພື່ອສັ່ງສອນໃຫ້ທຸກຄົນຮ່ຳຮຽນໜັງສືສັນສະກິດ ແລະ ປະຕິບັດຕາມລະບຽບກົດໝາຍທີ່ພໍ່ຂອງຕົນໄດ້ວາງໄວ້.

ເຈົ້າເຈັດຈອມ ປົກຄອງບ້ານເມືອງໃນໄລຍະໜຶ່ງ ແລ້ວກໍ່ໄດ້ເຖິງແກ່ກຳ, ພວກເສນາອາມາດຈຶ່ງຍົກເຈົ້າເຈັດຈອດ ທີ່ເປັນລູກຂອງເຈົ້າເຈັດຈອມຄອງລາຊະສົມບັດ, ແຕ່ໃນພົງສາວະດານເມືອງພວນບໍ່ໄດ້ ບອກວ່າພັນລະຍາຂອງເຈົ້າເຈັດຈອມແມ່ນໃຜ, ຊື່ວ່າແນວໃດ ແລະ ເຈົ້າເຈັດຈອດຂຶ້ນສະເຫວີຍລາດປີໃດ, ເຈົ້າເຈັດຈອດບໍ່ປະກົດວ່າໄດ້ເຮັດອັນໃດສຳເລັດໃຫ້ແກ່ບ້ານເມືອງ, ມີແຕ່ສືບຕໍ່ເຮັດໃຫ້ປະຊາຊົນມີຄວາມສະຫງົບ ແລະ ທຳມາຫາກິນດ້ວຍການເຮັດນາ ແລະ ລ້ຽງສັດເທົ່ານັ້ນ.

ເມື່ອເຈົ້າເຈັດຈອດ ເຖິງແກ່ກຳ ເສນາອາມາດກໍ່ໄດ້ແຕ່ງຕັ້ງໃຫ້ເຈົ້າເຈັດຈິວ ຜູ້ເປັນລູກຂອງເຈົ້າເຈັດຈອດ ຂຶ້ນຄອງລາຊະສົມບັດ; ເຈົ້າເຈັດຈິວ ໄດ້ແນະນຳໃຫ້ປະຊາຊົນປະດິດໄຖດ້ວຍເຫລັກ ແລະ ຄາດດ້ວຍໄມ້ ໂດຍເອົາຄວາຍໄຖນາ ຄາດນາ, ຫວ່ານກ້າ ດຳນາ ເຮັດໃຫ້ການຜະລິດຜົນເພີ່ມຂຶ້ນ, ແຕ່ກໍ່ຍັງສືບຕໍ່ ບວງສວງລ້ຽງຜີຕາມຮີດຄອງຂອງສາສະໜາພາມ.

ເມື່ອເຈົ້າເຈັດຈິວເຖິງແກ່ກຳ ເສນາອາມາດກໍ່ຍົກເຈົ້າເຈັດຈັນ ອັນເປັນລູກຂອງເຈົ້າເຈັດຈິວຂຶ້ນສະເຫວີຍລາດ, ຜູ້ນີ້ກໍ່ມີແຕ່ສືບຕໍ່ປະຕິບັດຮີດຄອງປະເພນີທີ່ພໍ່ຂອງຕົນໄດ້ສອນສັ່ງໄວ້.

ເມື່ອເຈົ້າເຈັດຈັນເຖິງແກ່ກຳ ເສນາອາມາດກໍ່ໄດ້ຍົກເອົາລູກຊາຍຂອງເພິ່ນທີ່ມີຊື່ວ່າ ເຈົ້າເຈັດຍອດຍໍຄຳຂຶ້ນຄອງລາຊະສົມບັດ, ຜູ້ນີ້ກໍ່ມີແຕ່ສືບທຸກສິ່ງທີ່ພໍ່ຕົນເຄີຍທຳມາ ເພື່ອຮັກສາຄວາມສະຫງົບຂອງບ້ານເມືອງເທົ່ານັ້ນ.

ເມື່ອເຈົ້າເຈັດຍອດຍໍຄຳເຖິງແກ່ກຳໄປ ເສນາອາມາດກໍ່ໄດ້ຍົກເອົາເຈົ້າຍີ ທີ່ເປັນລູກຂອງເຈົ້າເຈັດຍອດຍໍຄຳ ຂຶ້ນສະເຫວີຍລາດ ໂດຍຖວາຍພະນາມວ່າ ເຈົ້າພະຍີທິນ, ແຕ່ໃນເອກະສານທີ່ຄົ້ນຄວ້າບໍ່ໄດ້ ບອກວ່າເຈົ້າພະຍີທິນແຕ່ງດອງກັບຜູ້ໃດ, ພຽງແຕ່ຮູ້ວ່າເຈົ້າພະຍີທິນມີລູກຊາຍສອງຄົນທີ່ໃສ່ຊື່ວ່າ ເຈົ້າພະຄີ ແລະ ເຈົ້າສັ້ນ; ເມື່ອເຈົ້າພະຍີທິນເຖິງແກ່ກຳເຈົ້າພະຄີ ໄດ້ຂຶ້ນຄອງລາຊະສົມບັດ; ເຈົ້າພະຄີມີລູກຊາຍຄົນໜຶ່ງທີ່ມີຊື່ວ່າເຈົ້າຄຳລຸນ; ເມື່ອເຈົ້າພະຄີເຖິງແກ່ກຳກໍ່ແມ່ນເຈົ້າ

ຄຳລຸນໄດ້ຂຶ້ນຄອງລາຊະສົມບັດ, ເຈົ້າຄຳລຸນ ໄດ້ໄປຢ້ຽມຢາມປະຊາຊົນໃນທົ່ວລາຊະອານາຈັກ ແລະ ສັ່ງສອນໃຫ້ທັງປະຊາຊົນເຜົ່າພວນ ແລະ ເຜົ່າຂະມຸສາມັກຄີຮັກແພງກັນ ໂດຍປ່ອຍໃຫ້ຊົນເຜົ່າຂະມຸ ຟັນຕົ້ນໄມ້ ມ້າງປາເຮັດໄຮ່ ເພື່ອປູກເຂົ້າ ແລະ ເມື່ອເຫັນຊົນເຜົ່າພວນຮູ້ຈັກຂຸດບໍ່ເຫລັກມາຜະລິດເຄື່ອງມືກໍ່ໄດ້ແນະນຳໃຫ້ປະຊາຊົນໃຊ້ເຫລັກເຮັດພະນຽງໄຖ ເພື່ອສະດວກໃຫ້ແກ່ການໄຖນາ ແລະ ຖືວ່າບໍ່ເຫລັກນັ້ນມີຜີຮັກສາ, ເມື່ອຂຸດເອົາບໍ່ເຫລັກກໍ່ຕ້ອງຂ້າໝູ ແລະ ຂ້າຄວາຍເພື່ອລ້ຽງຜີພ້ອມກັນ.

ເຈົ້າພະຄືເປັນຜູ້ຮູ້ວ່າມີບໍ່ຄຳຢູ່ບ້ານຈ່ານື່ນ ຈຶ່ງໄປພາປະຊາຊົນຂ້າຄົນລ້ຽງຜີປີລະຄົນ ແລ້ວຂຸດເອົາ ແຮ່ມາປັ່ນຄຳ, ໄດ້ທໍ່ໃດແບ່ງເອົາໜຶ່ງສ່ວນສິບມາໃຫ້ແກ່ຕົນ ເພື່ອສ້າງພະຄັງຂອງເຈົ້າຊີວິດ. ພ້ອມກັນນັ້ນ ກໍ່ຖືວ່າບໍ່ນ້ຳທ່ຽງທີ່ເອີ້ນວ່າພັງພາຍເປັນບ່ອນເຂັດຢຳ ຈຶ່ງພາປະຊາຊົນເອົາດອກໄມ້ທູບທຽນໄປບູຊາໃນວັນ ສຳຄັນຂອງຊາດ; ເພື່ອຄວາມມ່ວນຊື່ນ ແລະ ເພີ່ມສະບຽງອາຫານກໍ່ໄດ້ຊັກຊວນປະຊາຊົນໄປຕັນຄອນ ວັງເຫລັກໃນນ້ຳງື້ວທີ່ຢູ່ໃຕ້ເມືອງຊຽງຂວາງ ເພື່ອຫາເອົາປາດ້ວຍທຸກວິທີ, ໄດ້ມາແລ້ວກໍ່ລວມກັນແບ່ງປັນ ໜຶ່ງສ່ວນສິບຂອງປາທີ່ຈັບໄດ້ມາໃຫ້ແກ່ເຈົ້າຊີວິດຄືກັນ.

ເຈົ້າພະຄື ມີລູກຊາຍຄົນໜຶ່ງຊື່ວ່າເຈົ້າຄຳລຸນ, ແຕ່ບໍ່ປະກົດເຫັນວ່າເຈົ້າຄຳລຸນ ແຕ່ງດອງກັບໃຜ ແຕ່ຫາກຮູ້ແຕ່ວ່າຫລັງຈາກເຈົ້າພະຄືທີ່ເປັນພໍ່ຂອງຕົນເຖິງແກ່ກຳໄປແລ້ວ ເຈົ້າຄຳລຸນກໍ່ຂຶ້ນຄອງລາຊະສົມບັດແທນພໍ່.

ເຈົ້າຄຳລຸນ ມີລູກຊາຍຄົນໜຶ່ງຊື່ວ່າ ເຈົ້າຄຳເຜົ້ງ ແຕ່ຫາກບໍ່ຮູ້ວ່າຊື່ແມ່ວ່າແນວໃດ. ເມື່ອເຈົ້າຄຳລຸນ ເຖິງແກ່ກຳໄປ ເຈົ້າຄຳເຜົ້ງ ກໍ່ໄດ້ຂຶ້ນຄອງລາຊະສົມບັດ.

ເຈົ້າຄຳເຜົ້ງ ເຖິງແກ່ກຳໄປກໍ່ແມ່ນເຈົ້າຄຳຂອດ ຜູ້ເປັນລູກຊາຍໄດ້ຂຶ້ນຄອງລາຊະສົມບັດແທນ ແຕ່ບໍ່ຮູ້ວ່າໃນການຄອງລາຊະສົມບັດນັ້ນເຈົ້າຄຳຂອດໄດ້ເຮັດຫຍັງ ທີ່ເປັນອັນແຕກຕ່າງກັບພໍ່ຂອງຕົນ.

ເຈົ້າຄຳຂອດ ໄດ້ສ້າງຄອບຄົວກັບນາງຄົນໜຶ່ງທີ່ໃນພົງສາວະດານບໍ່ໄດ້ບອກຊື່, ພຽງແຕ່ເວົ້າວ່າ ມີລູກຊາຍຄົນໜຶ່ງຊື່ເຈົ້າຄຳຮອງທີ່ໄດ້ຂຶ້ນສະເຫວີຍລາດແທນພໍ່ ຫລັງຈາກເຈົ້າຄຳຂອດໄດ້ເຖິງແກ່ກຳໄປ.

ເຈົ້າຄຳຮອງ ກໍ່ບໍ່ຮູ້ວ່າແຕ່ງດອງກັບນາງທີ່ມີຊື່ໃດ, ພຽງແຕ່ຮູ້ວ່າມີລູກຊາຍຄົນໜຶ່ງຊື່ວ່າເຈົ້າຄຳແຈດ ທີ່ໄດ້ຂຶ້ນຄອງລາຊະສົມບັດໃນເມື່ອເຈົ້າຄຳຮອງສິ້ນພະຊົນໄປ.

ເຈົ້າຄຳແຈດ ມີລູກຊາຍຄົນໜຶ່ງເໝືອນກັນຊື່ວ່າເຈົ້າຄຳຝັ້ນ; ເມື່ອເຈົ້າຄຳແຈດເຖິງແກ່ກຳໄປ ເສນາອາມາດກໍ່ໄດ້ຍົກເຈົ້າຄຳຝັ້ນຂຶ້ນຄອງລາຊະສົມບັດ.

ເຈົ້າຄຳຝັ້ນ ແຕ່ງດອງກັບນາງຄົນໜຶ່ງທີ່ພົງສາວະດານບໍ່ໄດ້ບອກຊື່ ແລະ ມີລູກຊາຍສອງຄົນທີ່ມີ ຊື່ວ່າ ເຈົ້າເຮືອ ແລະ ເຈົ້າຄຳຜິນ; ເມື່ອເຈົ້າຄຳຝັ້ນເຖິງແກ່ກຳໄປເຈົ້າເຮືອຜູ້ເປັນອ້າຍໄດ້ວ່າການແທນພໍ່ ຊົ່ວຄາວ, ຍ້ອນວ່າຈິດໃຈບໍ່ເຕັມ ຈຶ່ງໄດ້ມອບລາຊະສົມບັດໃຫ້ແກ່ນ້ອງຊາຍຜູ້ຊື່ວ່າເຈົ້າຄຳຜິນຂຶ້ນຄອງລາຊະສົມບັດແທນຕົນ, ໃນເມື່ອອາຍຸເຖິງກະສຽນແລ້ວ.

ເຈົ້າຄຳຜິນ ມີລູກຊາຍຄົນໜຶ່ງ ຊື່ວ່າເຈົ້າຄຳທົນ ທີ່ໄດ້ຂຶ້ນຄອງລາຊະສົມບັດຫລັງຈາກເຈົ້າຄຳຜິນ ຜູ້ເປັນພໍ່ໄດ້ເຖິງແກ່ກຳໄປແລ້ວ.



24/7 VII
ຫາມຈຳໜ່າຍ

ເຈົ້າຄຳຫົນ ມີລູກຊາຍໜຶ່ງຄົນຊື່ວ່າເຈົ້າຄຳຕຶກສາດ ທີ່ໄດ້ຂຶ້ນຄອງລາຊະສົມບັດຫລັງຈາກເຈົ້າຄຳຫົນເຖິງແກ່ກຳໄປ.

ເຈົ້າຄຳຕຶກສາດ ມີລູກຊາຍໜຶ່ງຄົນທີ່ມີຊື່ວ່າ ເຈົ້າຄຳຄອນ ທີ່ໄດ້ຂຶ້ນສະເຫວີຍລາດແທນພໍ່ຫລັງຈາກເຈົ້າຄຳຕຶກສາດເຖິງແກ່ກຳໄປ.

ເຈົ້າຄຳຄອນ ມີລູກຊາຍໜຶ່ງຄົນທີ່ມີຊື່ວ່າ ເຈົ້າຄຳລ້ອນ ທີ່ໄດ້ຂຶ້ນສະເຫວີຍລາດແທນພໍ່ຫລັງຈາກ ເຈົ້າຄຳຄອນເຖິງແກ່ກຳໄປ.

ເຈົ້າຄຳລ້ອນ ມີລູກຊາຍຄົນໜຶ່ງ ເຊິ່ງບໍ່ຮູ້ວ່າແມ່ຊື່ວ່າແນວໃດ, ຮູ້ແຕ່ວ່າລູກຊາຍຄົນນັ້ນຊື່ເຈົ້າຄຳໜ້າ ທີ່ໄດ້ຂຶ້ນຄອງລາຊະສົມບັດໃນເມື່ອເຈົ້າຄຳລ້ອນເຖິງແກ່ກຳໄປແລ້ວ.

ເຈົ້າຄຳໜ້າ ມີລູກຊາຍໜຶ່ງຄົນຊື່ວ່າເຈົ້າຄຳທ້າວ ແຕ່ບໍ່ຮູ້ວ່າແມ່ຊື່ວ່າແນວໃດ, ເມື່ອເຈົ້າຄຳໜ້າເຖິງແກ່ກຳໄປເຈົ້າຄຳທ້າວກໍ່ໄດ້ຂຶ້ນຄອງລາຊະສົມບັດ.

ເຈົ້າຄຳທ້າວ ບໍ່ຮູ້ວ່າໄດ້ແຕ່ງດອງກັບນາງໃດແຕ່ຫາກຮູ້ວ່າມີລູກຊາຍຄົນໜຶ່ງຊື່ວ່າເຈົ້າຄຳເຄົ້າ ທີ່ໄດ້ຂຶ້ນສະເຫວີຍລາດແທນພໍ່ ໃນເມື່ອເຈົ້າຄຳທ້າວເຖິງແກ່ກຳໄປ.

ເຈົ້າຄຳເຄົ້າມີລູກຊາຍຄົນໜຶ່ງຊື່ວ່າເຈົ້າຄຳຜົງ ທີ່ໄດ້ຂຶ້ນຄອງລາຊະສົມບັດຫລັງຈາກພໍ່ຂອງຕົນໄດ້ ເຖິງແກ່ກຳໄປໃນເມື່ອຈຸນລະສັງກາດໄດ້ 651 ປີ. ເທົ່າກັບຄິດຕະສັງກາດ 1239; ໃນເວລານັ້ນ ມີເຊື້ອເຈົ້າແກວ ຄົນໜຶ່ງຊື່ວ່າ ເລຢຸຍບັດ ທີ່ພະຍາຍາມຍາດຂຶ້ນຄອງລາຊະສົມບັດແທນພີ່ຊາຍ ແຕ່ບໍ່ສຳເລັດຈຶ່ງໄດ້ພານ້ອງສາວຊື່ນາງບາໂກ ໂຕນໜີມາອາໄສຢູ່ເມືອງພວນ ແລ້ວຍົກນ້ອງສາວຂອງຕົນໃຫ້ແກ່ ເຈົ້າຄຳຜົງ ເພື່ອເປັນມະເຫສີ ແລ້ວກໍ່ຂໍເອົາກຳລັງຄົນພວນກັບຄືນໄປຕີພີ່ຊາຍຂອງເຂົາ, ແຕ່ຖືກປະລາໄຊ ຈຶ່ງກັບຄືນມາເມືອງຊຽງຂວາງ ແລ້ວເອົາຕົນເຂົ້າໄປໃນສາງໝີ່ ແລະ ຂີດກັບໄຟໃສ່ໃຫ້ໄໝ້ໝີ່ ເພື່ອຂ້າຕົນເອງຕາຍໃສ່ຂ້າງຄຸ້ມເຈົ້າຊີວິດ. ນາງບາໂກ ຜູ້ເປັນນ້ອງໄດ້ໄປປຸກທາດໃສ່ບ່ອນນັ້ນ ເພື່ອເຫັນບຸນຄຸນຂອງຜູ້ເປັນອ້າຍ ແລ້ວກໍ່ສືບຕໍ່ຖວາຍຄວາມສັກກະລະບູຊາ. ແຕ່ວ່າເຈົ້າຊີວິດແກວ ກໍ່ໄດ້ຕິດຕາມມາຕີແຂວງພວນ ເຮັດໃຫ້ເຈົ້າຄຳຜົງ ປະລາໄຊ ແລະ ຍອມເອົາແຂວງພວນໄປຂຶ້ນກັບປະເທດແກວ.

ເຈົ້າຄຳຜົງມີລູກຊາຍໜຶ່ງຄົນໃສ່ຊື່ວ່າເຈົ້າຄຳຍັກ ເຊິ່ງເມື່ອໃຫຍ່ມາໄດ້ໄປເປັນຊູ້ກັບເມຍນ້ອຍຂອງ ພໍ່ ເລີຍຖືກຂັບໄລ່ໜີອອກຈາກເມືອງ ໄປຢູ່ເມືອງບໍລິຄັນ ໂດຍອາໄສການຊ່ວຍເຫລືອຂອງປະຊາຊົນເມືອງ ຄຳມ່ວນ, ເມືອງຈຳພອນ ແລະ ເມືອງເຊໂປນ ມາເປັນຜູ້ພິທັກຮັກສາ; ຮອດປີ ຈຸນລະສັງກາດ 711. ກົງກັບຄິດຕະສັງກາດ 1299 ເຈົ້າຄຳຍັກ ຈຶ່ງໄດ້ກັບຄືນຂຶ້ນໄປເມືອງຊຽງຂວາງ ພ້ອມກັນກັບກອງທັບຂອງພະຍາຟ້າງຸ່ມ, ຕີເມືອງພວນຊະນະເຈົ້າຄຳຜົງຜູ້ເປັນພໍ່ ຈຶ່ງຍອມຍົກລາຊະສົມບັດໃຫ້ແກ່ເຈົ້າຄຳຍັກ ຂຶ້ນຄອງລາດ ໄດ້ປຽນຊື່ມາເປັນພະເຈົ້າຂຽວຄຳຍໍ່ ແລ້ວພະຍາຟ້າງຸ່ມກໍ່ໄດ້ຂໍກອງທັບເມືອງພວນຂຶ້ນໄປສູ້ ຮົບກັບພະຍາສຸວັນນະຄຳຜົງທີ່ຢູ່ເມືອງຊຽງດົງ ຊຽງທອງ; ຫລັງຈາກນັ້ນ ເຈົ້າຟ້າງຸ່ມກໍ່ໄດ້ຍົກກອງທັບໄປຕີ ຍຶດເອົາເມືອງຊຽງໃໝ່, ລຳພູນ, ລຳປາງ, ຊຽງຮາຍ ແລະ ທຸກບ່ອນທີ່ມີຄົນລາວໄປຕັ້ງຢູ່; ແຕ່ເຈົ້າຊີວິດໄທ ທີ່ຢ້ານກົວຕໍ່ເດຊານຸພາບຂອງເຈົ້າຟ້າງຸ່ມ, ໃນເວລານັ້ນພະລາມາທິບໍດີອູ່ທອງ ທີ່ປົກຄອງໄທສະຫຍາມ ມີຄວາມຢ້ານກົວຕໍ່ເດຊານຸພາບຂອງເຈົ້າຟ້າງຸ່ມ ຈຶ່ງ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ